British Embassy
Vientiane

ສະຖານທູດອັງກິດ ປະຈໍານະຄອນຫຼວງວຽງຈັນ
ຖະໜົນ ເນຣູ
ບ້ານ ໂພນໄຊ,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)30 770 0000
BritishEmbassy.Vientiane@fco.gov.uk
facebook.com/UKinLaos

**ບົດຂ່າວ**

**ວັນຈັນ, 28ກັນຍາ 2015**

**ສໍາລັບການເຜີຍແຜ່ໂດຍທັນທີ**

# ທີມຣັກບີ້ລາວລຸ້ນນ້ອຍ ພະຍານາກ ໄດ້ຮັບການຕ້ອນຮັບເຂົ້າພິທີ ສົ່ງທີ່ໜ້າກະຕຸ້ນໃຈຢູ່ສະຖານທູດອັງກິດ

**ໃນວັນຈັນ ພະນະທ່ານເອກອັດຄະຣາຊະທູດອັງກິດປະຈໍາລາວ ທ່ານ ຮູ່ ອີວານ ໄດ້ຕ້ອນຮັບ ທີມພະຍານາກລຸ້ນນ້ອຍ ລຸ່ມ 13 ປີ ຈາກສະຫະພັນຣັກບີ້ລາວ ເພື່ອສົ່ງເຂົາເຈົ້າ ໃນໂອກາດ ທີ່ຈະເດີນທາງໄປຍັງສະຫະຣາຊະອານາຈັກ. ທີມຈະໄດ້ເຂົ້າຮ່ວມໃນມະຫະກໍາຊ່ວຍເຫຼືອການທ່ອງທ່ຽວ ຂອງຣັກບີ້ ທີ່ຈັດຂຶ້ນທີ່ອັງກິດ ໃນເວລາດຽວກັນກັບການແຂ່ງຂັນ ຣັກບີ້ໂລກ ປີ 2015.**

ໃນຕອນບ່າຍທີ່ສົດໄສນີ້ ພະຍານາກນ້ອຍທັງ 10 ອົງ (“ນາກ”ໃນພາສາລາວ) ໄດ້ຮັບການຕ້ອນຮັບ ສູ່ເຮືອນພັກຂອງພະນະທ່ານເອກອັກຄະຣາຊະທູດອັງກິດ ທີ່ວຽງຈັນ. ການມາຢ້ຽມຢາມທີ່ພິເສດນີ້ ໄດ້ເພີ່ມຄວາມຕື່ນເຕັ້ນຍິ່ງຂຶ້ນໄປອີກໃຫ້ແກ່ບັນດາ ນາກນ້ອຍເຫຼົ່ານີ້ ເຊິ່ງກໍ່ຕື່ນເຕັ້ນມາພໍສົມຄວນແລ້ວ ກ່ຽວກັບການໄປຢ້ຽມຢາມສະຫະຣາຊະອານາຈັກ ທີ່ໃກ້ຈະມາເຖິງ, ເຊິ່ງຈະນໍາພາເຂົາເຈົ້າໄປສູ່ກົກເຄົ້າກໍາເນີດຂອງກິລາຣັກບີ້. ທີມຈະອອກເດີນທາງ ໃນວັນທີ 29 ກັນຍາ ໄປເປັນເວລາ 10 ມື້ທີ່ໜ້າຕື່ນເຕັ້ນ ໃນມະຫາກໍາທ່ອງທ່ຽວຊ່ວຍເຫຼືອ ຂອງ ຣັກບີ້ ໃນອັງກິດ.

ໃນພິທີຕ້ອນຮັບ, ທ່ານເອກອັກຄະຣາຊະທູດ ຮູ່ ອີວານ ໄດ້ເນັ້ນໃຫ້ເຫັນເຖິງວ່າ ຣັກບີ້ໄດ້ເຮັດໃຫ້ ອັງກິດ ແລະ ລາວຍິ່ງໃກ້ຊິດກັນຫຼາຍຂຶ້ນ. “ທັງລາວ ແລະ ອັງກິດ ມີປະຫວັດກ່ຽວກັບ ຣັກບີ້ມາ ຍາວນານ ແລະ ທັງສອງປະເທດແນ່ນອນວ່າ ໄດ້ຮັບປະໂຫຍດໃນການພັດທະນາເຂົາເຈົ້າ ຈາກ ສິ່ງນີ້”

ທ່ານໄດ້ອະທິບາຍ. "ການເຊື່ອມໂຍງນີ້ ເສີມໃຫ້ແກ່ສາຍພົວພັນອັນດີທີ່ມີມາຍາວນານລະຫວ່າງປະຊາຊົນຂອງສອງປະເທດພວກເຮົາ. ການແລກປ່ຽນດ້ານວັດທະນາທຳທີ່ໜັກແໜ້ນຄືດັ່ງກ່າວນີ້ ປະກອບສ່ວນເຂົ້າໃນການຮ່ວມມືທີ່ສ້າງສັນ ເຊິ່ງປັດຈຸບັນກໍ່ກຳລັງໄດ້ຮັບການພັດທະນາລະຫວ່າງ ລາວ ແລະ ອັງກິດ." ທີມຣັກບີ້ ຈະໄດ້ປະສົບການທີ່ດີເລີດ ໃນອັງກິດ ແລະໄດ້ຮູ້ຈັກທັງປະຫວັດສາດ ແລະ ຄວາມທັນສະໄໝຂອງສະຫະຣາຊະອານາຈັກ. ແຕ່ໃນເວລາດຽວກັນ ທ່ານເອກອັກຄະຣາຊະທູດ ໄດ້ໃຫ້ຄຳແນະນຳແກ່ເດັກນ້ອຍວ່າ ບໍ່ຄວນເບິ່ງຖືວ່າຕົນເອງເປັນຜູ້ສັງເກດການເບິ່ງວັດທະນາທຳຕ່າງປະເທດເທົ່ານັ້ນ, ແຕ່ໃນຕົວຈິງໃຫ້ປະພຶດຕົນເປັນທູດວັດທະນາທຳນ້ອຍຂອງລາວ ໃນອັງກິດ: "ຄົນອັງກິດຈະສົນໃຈໃນເລື່ອງຂອງພວກເຈົ້າ. ເຂົາເຈົ້າຈະຢາກຮຽນຮູ້ກ່ຽວກັບວັດທະນາທຳລາວຂອງເຈົ້າ ແລະ ວິທີທາງໃນການດຳລົງຊີວິດຂອງລາວ. ດັ່ງນັ້ນ ບໍ່ໃຫ້ລັງເລທີ່ຈະສະແດງໃຫ້ເຫັນເຖິງສິ່ງທີ່ປະເທດລາວທີ່ງົດງາມສາມາດສະເໜີໃຫ້ແກ່ປະເທດອັງກິດທີ່ເກົ່າແກ່ດີງາມໄດ້."

ພະນະທ່ານທູດ ອີວານ ຍັງຮັບຮູ້ເຖິງວຽກງານຂອງສະຫະພັນຣັກບີ້ລາວ ທີ່ເຮັດວຽກກັບເດັກນ້ອຍ ແລະ ຊຸມຊົນຊົນນະບົດ ແລະ ເນັ້ນເຖິງບົດບາດສຳຄັນຂອງກິລາຕໍ່ການພັດທະນາເດັກນ້ອຍ. ນອກຈາກການໄດ້ຮັບຄວາມແຂງແຮງທາງດ້ານຮ່າງກາຍ, ຄວາມເຂັ້ມແຂງ ແລະ ການປະສານງານແລ້ວ, ກິລາຄືກັບຣັກບີ້ ຍັງເສີມສ້າງສະມາທິ, ທັກສະການປະເມີນ ແລະ ທັກສະການວິເຄາະ ໃຫ້ແກ່ເດັກນ້ອຍນຳອີກ. ມັນໃຫ້ໂອກາດແກ່ເດັກນ້ອຍ ໄດ້ທົດສອບຕົວເອງ ແລະ ສ້າງຄ່ານິຍົມ ແລະ ທັກສະຕົ້ນຕໍ ລວມທັງຈິດວິນຍານດ້ານການແຂ່ງຂັນ, ທັກສະທາງສັງຄົມ, ການຍອມຮັບຜູ້ອື່ນ ແລະ ການນັບຖືຕົນເອງ. ໃນສະພາບການຄືດັ່ງກ່າວນີ້, ພະນະທ່ານທູດ ໄດ້ຍົກຄຳເວົ້າຈາກບົດກ່າວເປີດ ໃນຫວ່າງມໍ່ໆນີ້ ທີ່ກ່າວໃນການແຂ່ງຂັນຣັກບີ້ໂລກ ປີ 2015 ທີ່ ອົງຊາຍ ເຮັນຣີ້ ແຫ່ງ ເວລສ໌ ໄດ້ກ່າວໄວ້ວ່າ: "ຂ້າພະເຈົ້າ ບໍ່ສາມາດຄິດເຖິງກິລາອື່ນໃດ ທີ່ຜົນສຳເລັດຂອງທີມ ແມ່ນມີການແບບຫາບເທົ່າທຽມກັນດ້ວຍບ່າຂອງທຸກໆຄົນໃນທີມ."

ສຳລັບນາກນ້ອຍສ່ວນຫຼາຍ ນີ້ແມ່ນການເດີນທາງຄັ້ງທຳອິດອອກຈາກແຂວງຂອງເຂົາເຈົ້າ. ໃນງານມະຫະກຳ, ເຂົາເຈົ້າຈະໄດ້ປະສົບການການຕ້ອນຮັບແບບອັງກິດ ແລະ ວັດທະນາທຳຂອງອັງກິດ. 10 ນາກນ້ອຍ ຈະພັກຢູ່ກັບຄອບຄົວຂອງນັກສຶກສາ ຈາກ ເຮືອນຂອງໂຮງຮຽນ ຊະແຣສະເບີຣີ ໃນ ເຊີເຣ ຢູ່ທາງພາກຕາເວັນຕົກສ່ຽງໃຕ້ຂອງ ລອນດອນ. ໃນລະຫວ່າງງານມະຫາກຳ ນັກຫຼິ້ນຂອງລາວ ພ້ອມກັບເຈົ້າພາບອັງກິດ ຈະປະເຊີນໜ້າຢ່າງທ້າທາຍກັບ ອີກ 9 ທີມອື່ນໆ ຈາກ ອິນເດຍ, ເຄັນຢາ, ອູການດາ, ອາຟຣິກາໃຕ້, ສະວາຊີແລນ, ບອດສະວານາ, ຮົງກົງ ແລະ ໂຄລຳເບຍ. ເຂົາເຈົ້າຈະເຂົ້າຮ່ວມໃນຫຼາຍໆກິດຈະກຳ ແລະ ການເດີນທາງໄປເພື່ອຮຽນຮູ້ກົກເຄົ້າກຳເນີດຂອງຣັກບີ້, ເຊື່ອມ

ຕໍ່ກັບວິທີທາງດໍາລົງຊີວິດຂອງອັງກິດ ແລະ ໄດ້ປະສົບການຈາກງານມະຫາກໍາກິລາທີ່ໃຫຍ່ເປັນອັນດັບສາມຂອງໂລກ – ມະຫາກໍາຣັກບີ້ໂລກ 2015.

ນາກນ້ອຍ ຈະຢູ່ໃນອັງກິດ ຈາກ ວັນທີ 1 – 10 ຕຸລາ. ຖ້າທ່ານສົນໃຈໃນປະສົບການຂອງ ນາກນ້ອຍ ໃນອັງກິດ ທ່ານສາມາດຕິດຕາມເບິ່ງການເດີນທາງຂອງເຂົາເຈົ້າໄດ້ ຈາກ ເຟສບຸກ ຕາມທີ່ຢູ່ www.facebook.com/laorugby.

###

# ຄຳນຳຈາກບັນນາທິການ / ຂໍ້ມູນຄວາມເປັນມາ

*Lao Rugby Federation* (LRF) – In response to increasing interest in the sport, in 2001 the Lao Rugby Federation was founded to provide a formal framework for all rugby union activities taking place in the Lao PDR, whether in the context of school, community or domestic and elite international rugby development. In the 15 years of its existence the LRF has seen tremendous growth, not only in programming and capital, but also in the local capacity to administer the sport to a high international level. The LRF is a full member of the Asian Rugby Football Union (ARFU) and an associate member of the International Rugby Board (IRB). The LRF has achieved full recognition from the Government of Laos and the National Sports Committee. The LRF will hold the 8th Vientiane International Rugby Championship on 20/21 February 2015. For more information visit www.laorugby.com.

*TourAid Festival of Rugby* – The primary aim of TourAid is to create long term social and economic benefits for children and young adults from disadvantaged communities throughout the world by creating links between these communities and schools or clubs in the UK. These changes are achieved through a tour to the UK, during which the group participate in joint activities with host schools/clubs and families. Having children living in their homes creates special bonds between the overseas and UK communities which result in the hosts wishing to provide continued support to the tourists, so the tour lives on. For more information visit www.touraid.org.

*Rugby World Cup 2015* – The 2015 Rugby World Cup is the 8th Rugby World Cup. The tournament is currently being hosted by England from 18 September to 31 October. Twickenham Stadium in London hosted the opening ceremony and opening match England-Fiji and will also host the final. In the world cup 20 teams are competing for the so called Webb Ellis Cup, namely: Australia, England, Wales, Fiji, Uruguay, South Africa, Samoa, Scotland, Japan, United States, New Zealand, Argentina, Tonga, Georgia, Namibia, France, Ireland, Italy, Canada, Romania. For more information visit www.rugbyworldcup.com.

## ເອກະສານສະໜັບສະໜູນ

ເອກະສານຮູບພາບຕ່າງໆ ແມ່ນຄັດຕິດມາພ້ອມນີ້ ຫຼື ສະເໜີຂໍໄດ້:

- ທີ່ຢູ່ສົ່ງເຖິງ ພະນະທ່ານເອກອັກຄະຣາຊະທູດອັງກິດ
- ທີ່ຢູ່ສົ່ງເຖິງ ປະທານສະຫະພັນຮັກບີ້ລາວ
- ການມອບເສື້ອຍືດ / ຂອບຮູບ
- ຮູບພາບຂອງທີມ
- ຮູບພາບຮັກບີ້ຂອງສະຫະຣາຊະອານາຈັກ

## ຕິດຕໍ່

**Dr Nils Koenig | Communications & Policy Officer | British Embassy | Vientiane**
Rue J Nehru, Ban Phonexay, Saysettha District, Vientiane, the Lao PDR
Email: nils.koenig@fco.gov.uk | Mob: +856 20 5458 2124 | Fax: +856 30 770 0010 |

**Visit our website:** https://www.gov.uk/government/world/laos
**Read our Ambassador's blog:** http://blogs.fco.gov.uk/hughdevans/
**Follow us on Facebook:** https://www.facebook.com/UKinLaos
**Follow us on Twitter:** https://twitter.com/UKinLaos

GREAT
BRITAIN